ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອັດຕະປື

ເລກທີ 18 /ຈຂ.ອປ

ອັດຕະປື, ວັນທີ 30 ພະຈິກ 2018

# ຄຳສັ່ງແນະນຳ

ກ່ຽວກັບການປຸກລະດົມເຂົ້າຮ່ວມ
ຜະລິດລະດູແລ້ງໃຫ້ເປັນຂະບວນການຢ່າງກ້ວງຂວາງ.

**ເຖິງ:** ທ່ານເຈົ້າເມືອງ 05ເມືອງ, ພະແນກການອ້ອມຂ້າງແຂວງ ແລະ ຫ້ອງການທຽບເທົ່າອ້ອມຂ້າງແຂວງ.

- **ອີງຕາມ:** ກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- **ອີງຕາມ:** ກົດໝາຍຊົນລະປະທານ ສະບັບເລກທີ 62/ສພຊ, ລົງວັນທີ 14 ທັນວາ 2012. ພາກທີ IV ມາດຕາ 46-51 ວ່າດ້ວຍ ການສ້າງຕັ້ງກຸ່ມ ແລະ ສະມາຄົມຜູ້ນຳໃຊ້ນ້ຳຊົນລະປະທານ.

ສະພາບການຈັດຕັ້ງປະຕິບັດ ການຜະລິດລະດູຝົນປີນີ້ ເຫັນວ່າພໍ່ແມ່ພີ່ນ້ອງຊາວກະສິກອນ ແຂວງອັດຕະປື ພວກເຮົາໄດ້ເອົາໃຈໃສ່ລົງສູ່ການຜະລິດແຕ່ຫົວປີຢ່າງທົ່ວເຖິງ ເຊິ່ງແຜນການປູກເຂົ້າໃນປີນີ້ໃຫ້ໄດ້ 26 ພັນກວ່າເຮັກຕາ, ໃນນັ້ນປູກເຂົ້າໄຮ່ 2.130 ເຮັກຕາ. ແຕ່ຈັດຕັ້ງປະຕິບັດຕົວຈິງໄດ້ 24 ພັນກວ່າເຮັກຕາ ແລະ ເຂົ້າໄຮ່ໄດ້ 2017 ເຮັກຕາ. ເນື່ອງຈາກວ່າ ແຂວງອັດຕະປືຂອງພວກເຮົາໄດ້ຮັບຜົນກະທົບຈະພະຍຸ "ເຊີນຕິນ" ໃນກາງເດືອນ ກໍລະກົດ ປີ 2018, ພະຍຸເບບິງກາ ແລະ ສັນຄູກັນນ້ຳເຂື່ອນເຊປຽນ-ເຊນ້ຳນ້ອຍແຕກ ໄດ້ສົ່ງຜົນກະທົບຕໍ່ຊີວິດ, ຊັບສິນ ແລະ ເຮືອນຊານ ຂອງພໍ່ແມ່ປະຊາຊົນ ເສຍຫາຍເປັນຈຳນວນຫຼາຍພໍສົມຄວນ. ໃນນັ້ນ ເນື້ອທີ່ທຳການຜະລິດທີ່ຖືກຜົນກະທົບ ມີ 6.000ກວ່າເຮັກຕາ ແລະ ຖືກເສຍຫາຍ 3.000ກວ່າເຮັກຕາ. ເນື້ອທີ່ປູກພືດ, ໄມ້ໃຫ້ໝາກ, ໄມ້ອຸດສະຫະກຳ, ສັດລ້ຽງ ງົວ, ຄວາຍ, ໝູ, ແບ້ ແລະ ສັດປີກໄດ້ສູນຫາຍເປັນຈຳນວນຫຼວງຫຼາຍ ເພື່ອຮັບປະກັນດ້ານສະບຽງອາຫານໃຫ້ພຽງພໍພາຍໃນແຂວງ ແລະ ເພື່ອສະໜອງອາຫານໃຫ້ແກ່ພີ່ນ້ອງ ເມືອງສະໜາມໄຊ ທີ່ຖືກຜົນກະທົບໜັກໄດ້ມີເຂົ້າ ແລະ ອາຫານກິນຢ່າງພໍພຽງ ເພື່ອເຮັດໃຫ້ການຜະລິດລະດູແລ້ງກາຍເປັນຂະບວນການກວ້າງຂວາງທົ່ວສັງຄົມ.

ເຈົ້າແຂວງອອກຄຳສັ່ງແນະນຳ:

1. ໃຫ້ເຈົ້າເມືອງຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ອົງການຈັດຕັ້ງທຸກຂັ້ນພາຍໃນເມືອງ ຕະຫຼອດຮອດອຳນາດການປົກຄອງບ້ານ ປຸກລະດົມ ແລະ ຊຸກຍູ້ໃຫ້ປະຊາຊົນ ຜູ້ທີ່ມີເນື້ອທີ່ທຳການຜະລິດໄດ້ເຮັດເຕັມເນື້ອທີ່ ຖ້າບໍ່ເຮັດໝົດ ຫຼື ບໍ່ສາມາດເຮັດເອງໄດ້ກໍ່ຕ້ອງສະຫຼະສິດໃຫ້ຜູ້ອື່ນເຮັດ. ເພື່ອບໍ່ໃຫ້ດິນທຳການຜະລິດໄດ້ເປົ່າຫວ່າງ ເຊັ່ນ: ເນື້ອທີ່ດິນຕ່ຳກໍ່ຕ້ອງປູກເຂົ້າ ແລະ ພືດຜັກທີ່ຕ້ອງການນ້ຳຫຼາຍ, ເນື້ອທີ່ດິນສູງນ້ຳບໍ່ພຽງພໍກໍ່ຄວນປູກພືດທີ່ບໍ່ຕ້ອງການນ້ຳຫຼາຍເຊັ່ນ: ປະເພດຖົ່ວ, ສາລີ, ໝາກໂມ, ຜັກສວນຄົວ ແລະ ພືດສະນິດອື່ນໆ.

2. ໃຫ້ອຳນາດການປົກຄອງທຸກຂັ້ນປຸກລະດົມ ຊຸກຍູ້ໃຫ້ປະຊາຊົນຜູ້ບໍ່ມີເນື້ອທີ່ທຳການຜະລິດເຂົ້າມາທຳການຜະລິດໃຫ້ເຕັມເນື້ອທີ່ ໃນໂຄງການຊົນລະປະທານທຸກແຫ່ງທີ່ສາມາດສະໜອງນ້ຳໄດ້.

3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແຕ່ງຕັ້ງພະນັກງານວິຊາການ ລົງຕິດຕາມຊຸກຍູ້ ແລະ ນຳພາປະຊາຊົນເຮັດຕົວຈິງໃນແຕ່ລະເຂດໂຄງການຊົນລະປະທານຢ່າງທົ່ວເຖິງ.

4. ພະແນກກະສິກຳ ແລະ ປ່າໄມ້ ໃຫ້ກຽມພ້ອມຂໍ້ມູນ, ການສະໜອງແນວພັນເຂົ້າ, ແນວພັນພືດ ແລະ ຝຸ່ນໃຫ້ພຽງພໍເພື່ອຮັບປະກັນໃຫ້ແກ່ການຍົກສະມັດຕະພາບຜົນຜະລິດເຂົ້າ ແລະ ພືດໃຫ້ສູງ.

5. ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເປັນການຜະລິດທົ່ວປວງຊົນຢ່າງເປັນຂະບວນຟົດຟື້ນ.

6. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ; ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດ.

ຕ. ເຈົ້າແຂວງ

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ພອນສະໄໝ ມຽງລາວັນ